ກະຊວງການເງິນ
ເລກ ຮັບ
ເວລາ.....
ວັນທີຮັບ 27-10-21
ເລກທີຮັບ 023428
ລົງຊື່.....

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະເລຂາທິການ

ເລກທີ 111 /ຄລສ.ກວທສ

ນະຄອນຫຼວງວຽງຈັນ, ວັນທີ 26 ຕຸລາ 2021

# ສະໂໜດນຳສົ່ງ

ຮຽນ: - ທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ທີ່ນັບຖື!

- ທ່ານ ລັດຖະມົນຕີກະຊວງການເງິນ ທີ່ນັບຖື!
- ທ່ານ ລັດຖະມົນຕີກະຊວງພາຍໃນ ທີ່ນັບຖື!
- ທ່ານ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ນັບຖື!
- ທ່ານ ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ!

ເລື່ອງ: ນຳສົ່ງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດ ທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ IX **(2021-2025)** ສະບັບປັບປຸງ.

- ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 64/ສພຊ, ລົງວັນທີ 09 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 74/ນຍ, ລົງວັນທີ 27 ກໍລະກົດ 2021;
- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນ ສິງຫາ 2021.

ຄະນະເລຂາທິການສະພາແຫ່ງຊາດ ຂໍຖືເປັນກຽດນຳສົ່ງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ **VIII** (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ **IX** (2021-2025) ສະບັບປັບປຸງ ຊຶ່ງມະຕິສະບັບປັບປຸງນີ້ ໄດ້ຮັກສາເດີມ ເລກທີ 20/ສພຊ ແລະ ລົງວັນທີ 26 ມີນາ 2021, ເນື່ອງຈາກໄດ້ປັບປຸງພຽງ 3 ຈຸດ ຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 74/ນຍ ລົງວັນທີ 27 ກໍລະກົດ 2021. ສະນັ້ນ, ເພື່ອການຈັດຕັ້ງປະຕິບັດແມ່ນໃຫ້ອີງໃສ່ມະຕິສະບັບເລກທີ 20/ສພຊ ໃໝ່ນີ້ ແທນສະບັບເລກທີ 20/ສພຊ (ສະບັບເກົ່າ) ແລະ ແຈກຢາຍໃຫ້ບັນດາສຳນັກງານ ແລະ ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຊາບ.

| ລຳດັບ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ **VIII** (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ **IX** (2021-2025) ສະບັບປັບປຸງ. | 01 | ເພື່ອຊາບ ແລະ ຈັດຕັ້ງປະຕິບັດ |

ຫົວໜ້າ ເລຂາທິການສະພາແຫ່ງຊາດ

ສະພາແຫ່ງຊາດ ຄະນະເລຂາທິການ

ສິງຄຳ ວົງພະຈັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 20 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 26/03/21

**ມະຕິ**

**ກອງປະຊຸມສະພາແຫ່ງຊາດ**

**ວ່າດ້ວຍ ການຮັບຮອງເອົາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ IX (2021-2025)**

**(ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 12 ຂໍ້ 2;
- ອີງຕາມບົດລາຍງານຂອງລັດຖະບານ, ລົງວັນທີ 22 ມີນາ 2021 ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ IX (2021-2025);
- ອີງຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 74/ລບ, ລົງວັນທີ 27 ກໍລະກົດ 2021 ກ່ຽວກັບການປັບປຸງຕົວເລກຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຕາມມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 20/ສພຊ, ລົງວັນທີ 26 ມີນາ 2021;
- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມຄະນະປະຈຳ ສະພາແຫ່ງຊາດ ປະຈຳເດືອນ ສິງຫາ 2021.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງກວ້າງຂວາງ ແລະ ເລິກເຊິ່ງ ດ້ວຍຄວາມຮັບຜິດຊອບ ສູງຂອງສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ໃນວາລະກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ IX ໃນລະຫວ່າງວັນທີ 22-26 ມີນາ 2021.

**ກອງປະຊຸມຕົກລົງ:**

**ມາດຕາ 1 ຮັບຮອງເອົາການສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)**

ກອງປະຊຸມສະແດງຄວາມຍ້ອງຍໍຊົມເຊີຍລັດຖະບານ ແລະ ເຫັນດີຮັບຮອງເອົາການສະຫຼຸບຕີລາຄາແຜນພັດທະນາເສດຖະກິດ-ສັງຄົມແຫທ່ງຊາດ 5 ປີ ຄັ້ງທີ VIII (2016-2020), ຊຶ່ງມີລາຍລະອຽດດັ່ງນີ້:

1) ຍົກໃຫ້ເຫັນສິ່ງທ້າທາຍຂອງພາກພື້ນ ແລະ ສາກົນ ບວກກັບຂໍ້ຫຍຸ້ງຍາກພາຍໃນປະເທດຫຼາຍປະການ ຊຶ່ງເປັນ ປັດໃຈສິ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຜ່ານມາ ບາງຄາດໝາຍບໍ່ສາມາດບັນລຸໄດ້ຕາມມະຕິສະພາແຫ່ງຊາດ;
2) ຍົກໃຫ້ເຫັນຜົນສຳເລັດທີ່ພົ້ນເດັ່ນ ເປັນຕົ້ນແມ່ນ: ໄດ້ບັນລຸ 2 ໃນ 3 ມາດຖານ ເພື່ອຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ, ສາມາດປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19, ເສດຖະກິດຍັງສືບຕໍ່ຂະຫຍາຍຕົວໃນລະດັບ ສະເລ່ຍ 5 ປີ ບັນລຸໄດ້ 5,8% (ມະຕິສະພາ 7,2%), ລາຍໄດ້ສະເລ່ຍຕໍ່ຫົວຄົນມາເຖິງປີ 2020 ບັນລຸໄດ້ 2.664 ໂດລາສະຫະລັດ/ຄົນ/ປີ (ມະຕິສະພາ 2.978 ໂດລາສະຫະລັດ/ຄົນ/ປີ), ຈຳນວນຄອບຄົວທຸກຍາກຍັງເຫຼືອ 62.384 ຄອບຄົວ ຫຼື ເທົ່າກັບ 5,16% ຂອງຄອບຄົວທັງໝົດທົ່ວປະທດ;
3) ໄດ້ຍົກໃຫ້ເຫັນຂໍ້ຄົງຄ້າງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ, ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ບັນຫາທີ່ຈະຕ້ອງໄດ້ເອົາໃຈໃສ່ຊີ້ນຳປະຕິບັດໃນ 5 ປີ ຂ້າງໜ້າ.

ກອງປະຊຸມເປັນເອກະພາບຕໍ່ 7 ບັນຫາຕົ້ນຕໍທີ່ຈະຕ້ອງແກ້ໄຂຮີບດ່ວນໃນ 5 ປີ ຕໍ່ໜ້າຕາມການສະເໜີຂອງລັດຖະບານ ດັ່ງນີ້:

1) ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການພັດທະນາຕາມທິດ 3 ສ້າງ ຄຽງຄູ່ກັບການສ້າງວຽກເຮັດງານທຳ ແລະ ການກະຈາຍລາຍໄດ້ໃຫ້ທົ່ວເຖິງກວ່າເກົ່າ ເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານສັງຄົມ (ລະຫວ່າງຄົນຮັ່ງ ແລະ ຄົນທຸກ, ຕົວເມືອງ ແລະ ຊົນນະບົດ), ສຸມໃສ່ຮັບປະກັນໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການສາທາລະນະ (ສຶກສາ, ສາທາ) ເປັນຕົ້ນ ຢູ່ເຂດຫ່າງໄກສອກຫຼີກໃຫ້ໄດ້ໂດຍພື້ນຖານ;
2) ແກ້ໄຂຄວາມບອບບາງທາງດ້ານເສດຖະກິດ ເປັນຕົ້ນແມ່ນການເຕີບໂຕສ່ວນໃຫຍ່ທີ່ເອື່ອຍອີງໃສ່ແຕ່ການຂຸດຄົ້ນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ທີ່ບໍ່ທັນມີປະສິດທິຜົນເທົ່າທີ່ຄວນ, ຄຸນນະພາບຂອງການເຕີບໂຕບໍ່ສູງ, ບໍ່ທັນສາມາດກະຈາຍລາຍໄດ້ຢ່າງທົ່ວເຖິງ, ຖານການຜະລິດຍັງບໍ່ທັນມີພື້ນຖານໜັກແໜ້ນ ແລະ ໝັ້ນຄົງ, ເພີ່ມທະວີການຕິດຕາມກວດກາການຈັດຕັ້ງປະຕິບັດບັນດາໂຄງການຈຸດສຸມ ທີ່ຊຸກຍູ້ການຜະລິດ ແລະ ບໍລິການ;
3) ແກ້ໄຂຄວາມບອບບາງດ້ານການເງິນ ໂດຍສຸມໃສ່ບັນຫາໜີ້ສິນສາທາລະນະ, ການເກັບລາຍຮັບບໍ່ຄົບຖ້ວນ, ຄວາມບໍ່ສົມຄູ່ກັບຄວາມສາມາດບົ່ມຊ້ອນ ແລະ ມີການຮົ່ວໄຫຼ, ງົບປະມານບໍ່ພຽງພໍກັບຄວາມຈຳເປັນຂອງການພັດທະນາ (ສ່ວນຫຼາຍແມ່ນສຸມໃສ່ແກ້ໄຂໜີ້ສິນ ທີ່ບໍ່ມີລັກສະນະກະຕຸ້ນລະບົບເສດຖະກິດ ແລະ ການພັດທະນາ);
4) ແກ້ໄຂຄວາມບອບບາງທາງດ້ານເງິນຕາ ໂດຍສຸມໃສ່ການແກ້ໄຂສະພາບການຂາດດຸນຊຳລະກັບຕ່າງປະທດ, ດັດສົມປະລິມານເງິນ M2 ເພື່ອສ້າງຄວາມຄ່ອງຕົວ ແລະ ສະໜອງສິນເຊື່ອໃຫ້ການຜະລິດ ແລະ ການບໍລິການພາຍໃນ ແນໃສ່ຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກ, ສ້າງຄວາມເຂັ້ມແຂງໃຫ້ຖານະຄັງສຳຮອງເງິນຕາຕ່າງປະທດ ເພື່ອຮັບປະກັນສະຖຽນລະພາບຂອງຄ່າເງິນ ແລະ ລາຄາ, ແກ້ໄຂສະພາບອັດຕາແລກປ່ຽນ ແລະ ຄວບຄຸມອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບທີ່ຄວບຄຸມໄດ້;
5) ແກ້ໄຂຜົນກະທົບການລະບາດພະຍາດໂຄວິດ-19 ເລັ່ງໃສ່ການຟື້ນຟູການຜະລິດ-ທຸລະກິດທີ່ໄດ້ຮັບຜົນກະທົບຈາກການລະບາດດັ່ງກ່າວ ໃຫ້ຄືນສູ່ສະພາບປົກກະຕິ, ເອົາໃຈໃສ່ແກ້ໄຂບັນຫາຫວ່າງງານ ແລະ ສ້າງສີມືແຮງງານ;
6) ແກ້ໄຂການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ແລະ ປະກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນ ບັນຫາຢາເສບຕິດ, ການສໍ້ລາດບັງຫຼວງ, ອຸປະຕິເຫດຕາມທ້ອງຖະໜົນໃຫ້ເຄັ່ງຄັດເຂົ້າສູ່ລວງເລິກ ທັນເຂົ້າສູ່ການຄຸ້ມຄອງດ້ວຍກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດ, ປັບປຸງ ແລະ ສ້າງສະພາບແວດລ້ອມ ເອື້ອອຳນວຍໃຫ້ແກ່ການດຶງດູດ

ການລົງທຶນ, ແກ້ໄຂປະກົດການສວຍໃຊ້ໜ້າທີ່ຂອງພະນັກງານໃນທາງທີ່ບໍ່ຖືກຕ້ອງ;

7) ສຸມໃສ່ການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ມີຈຸດສຸມ, ສົ່ງເສີມວິຊາຊີບ ແລະ ການຫັນເປັນຊ່ຽວຊານ ຕິດພັນກັບການຫັນເປັນທັນສະໄໝໃນຍຸກ 4.0 ແລະ ວິຖີຊີວິດແບບໃໝ່ (New Normal).

**ມາດຕາ 2 ຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)**

ກອງປະຊຸມເຫັນດີເປັນເອກະພາບຕໍ່ກັບການລາຍງານຂອງລັດຖະບານ ໂດຍສະເພາະແມ່ນບັນດາຄາດໝາຍສູ້ຊົນແຕ່ລະດ້ານ ດັ່ງນີ້:

1. ທິດທາງລວມ

ກອງປະຊຸມເຫັນດີຮັບຮອງເອົາ 3 ທິດທາງໃຫຍ່ທີ່ລັດຖະບານສະເໜີ ຕໍ່ກອງປະຊຸມ, ແຕ່ເພື່ອຮັບປະກັນໃຫ້ທິດທາງດັ່ງກ່າວ ມີລັກສະນະກວມລວມທຸກຂະແໜງການ ແລະ ເປັນບ່ອນອີງທີ່ຈະແຈ້ງໃຫ້ແກ່ການຈັດຕັ້ງຜັນຂະຫຍາຍແຜນວຽກຈຸດສຸມຂອງຂະແໜງການສູນກາງ ແລະ ທ້ອງຖິ່ນ ມີຄວາມສອດຄ່ອງກັບສະພາບ ແລະ ຈຸດພິເສດຕົວຈິງຂອງປະເທດເຮົາ, ກອງປະຊຸມສະເໜີປັບປຸງ, ສົບຊ້ອນເນື້ອໃນເພີ່ມເຕີມ ດັ່ງນີ້:

1) ຮັບປະກັນສະຖຽນລະພາບດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຢ່າງໜັກແໜ້ນ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ, ຮັບປະກັນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມສົມດູນ ລະຫວ່າງ ສາມເສົາຄໍ້າຂອງການພັດທະນາ ຄື ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໂດຍຖືເອົາເສດຖະກິດເປັນໃຈກາງ ເນັ້ນໃສ່ການເພີ່ມຂຶ້ນຂອງລາຍໄດ້ແຫ່ງຊາດ (GNI) ແລະ ການກະຈາຍລາຍໄດ້ໃຫ້ທົ່ວເຖິງ, ຖືເອົາບັນຫາສັງຄົມເປັນສິ່ງສຳຄັນ ໂດຍເນັ້ນໃສ່ການແກ້ໄຂຄວາມທຸກຍາກໃຫ້ຫຼຸດລົງເທື່ອລະກ້າວ ແລະ ການປົກປັກຮັກສາສິ່ງແວດລ້ອມເປັນສິ່ງຈຳເປັນ, ຮັບປະກັນການພັດທະນາ ແລະ ການເຕີບໂຕຕາມທິດ ມີຄຸນນະພາບ, ມີຈຸດສຸມ, ສີຂຽວ ແລະ ຍືນຍົງ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ, ປະຊາຊົນມີວຽກເຮັດງານທຳ, ແກ້ໄຂຄວາມທຸກຍາກ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນ, ຮັບປະກັນສິດຜົນປະໂຫຍດໃຫ້ທົ່ວເຖິງ, ສະເໝີພາບ ແລະ ທ່ຽງທຳ, ສ້າງພື້ນຖານເສດຖະກິດທີ່ໜັກແໜ້ນ ເພື່ອຮັບປະກັນການບັນລຸມາດຖານ ແລະ ເງື່ອນໄຂຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃຫ້ໜັກ ແໜ້ນພາຍໃນປີ 2025 ເພື່ອກ້າວໄປສູ່ປະເທດທີ່ມີລາຍຮັບປານກາງສູງໃນປີ 2030;

2) ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ ແລະ ອຸປະສັກຕ່າງໆໃນການພັດທະນາໃນໄລຍະຜ່ານມາ ພ້ອມທັງກຽມຮັບມືກັບສິ່ງທ້າທາຍທີ່ຈະເກີດຂຶ້ນໃນໄລຍະໃໝ່ ໂດຍການກຳນົດເອົາການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຫຼຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ, ບັນຫາການປະຢັດ-ຕ້ານການຟຸມເຟືອຍ, ແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂອຸປະຕິເຫດໃນທ້ອງຖະໜົນ ໃຫ້ກາຍເປັນວາລະແຫ່ງຊາດ; ເອົາໃຈໃສ່ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19 ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ;

3) ເສີມຂະຫຍາຍ, ຂຸດຄົ້ນ ແລະ ນຳໃຊ້ທ່າແຮງບົ່ມຊ້ອນຂອງຊາດໂດຍການນຳໃຊ້ວິກິດຂອງການແຜ່ລະບາດຂອງພະຍາດໂຄວິດ-19, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ເປັນໂອກາດ ແລະ ເປັນປະໂຫຍດສູງສຸດ ດັ່ງນີ້:

- ຫັນປ່ຽນໂຄງປະກອບເສດຖະກິດ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ມີຄວາມຫຼາກຫຼາຍ, ມີມູນຄ່າເພີ່ມສູງ, ມີຄຸນນະພາບ ແລະ ປະສິດທິພາບ, ສ້າງຂີດຄວາມສາມາດແຂ່ງຂັນໃນຕະຫຼາດສົ່ງອອກ ແລະ ຜະລິດທົດແທນການນຳເຂົ້າໃຫ້ໄດ້ຫຼາຍຂຶ້ນ, ເພີ່ມລາຍຮັບເງິນຕາເຂົ້າປະເທດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄັງສຳຮອງເງິນຕາຕ່າງປະເທດ ແລະ ອັດຕາແລກປ່ຽນເງິນກີບ;
- ສຸມໃສ່ການນຳໃຊ້ຈຸດພິເສດທາງດ້ານທີ່ຕັ້ງຂອງປະເທດເຮົາເພື່ອເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ

ແລະ ສາກົນ, ໂດຍການພັດທະນາພື້ນຖານໂຄງລ່າງດ້ານຄົມມະນາຄົມ ແລະ ການບໍລິການໂລຊິດສະຕິກຕາມແລວທາງເສດຖະກິດຂອງອະນຸພາກພື້ນ, ເຮັດໃຫ້ປະເທດເຮົາເປັນໃຈກາງການເຊື່ອມໂຍງດ້ານການຄ້າ ແລະ ການບໍລິການ ຂອງພາກພື້ນ ແລະ ສາກົນ ເພື່ອເສີມຂະຫຍາຍທ່າແຮງພັດທະນາປະເທດເຮົາໄປຕາມທິດທາງ ແລະ ຈຸດໝາຍທີ່ກຳນົດໄວ້.

## 2. ເປົ້າໝາຍລວມ

ກອງປະຊຸມເຫັນດີຮັບຮອງ 6 ເປົ້າໝາຍຕາມການສະເໜີຂອງລັດຖະບານ

1) ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ;
2) ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມໃນການຜະລິດ ແລະ ການບໍລິການ;
3) ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ;
4) ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ;
5) ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ;
6) ການຄຸ້ມຄອງບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ມີຄວາມສັກສິດ ແລະ ເຂັ້ມງວດ.

## 3. ແຜນວຽກຈຸດສຸມ

ກອງປະຊຸມເຫັນດີຮັບຮອງ 25 ແຜນວຽກຈຸດສຸມ ຕາມການລາຍງານຂອງລັດຖະບານ (ລາຍລະອຽດມີເອກະສານຊ້ອນທ້າຍ).

## 4. ຄາດໝາຍດ້ານເສດຖະກິດມະຫາພາກ ແລະ ຂະແໜງການ

### 4.1 ເສດຖະກິດມະຫາພາກ

#### 1) ການເຕີບໂຕເສດຖະກິດ

ຄາດຄະເນອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວສະເລ່ຍໃນລະດັບ 4% ຂຶ້ນໄປ ຕໍ່ປີ, ຄິດເປັນມູນຄ່າຕາມລາຄາໃນປີ 1.056.692 ຕື້ກີບ. ໃນປີ 2025 GDP ຕໍ່ຫົວຄົນໃຫ້ໄດ້ 2.880 ໂດລາສະຫະລັດ, ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນເທົ່າກັບ 2.280 ໂດລາສະຫະລັດ, ໃນນັ້ນ:

- ຂະແໜງກະສິກຳ ຂະຫຍາຍຕົວສະເລ່ຍ 2,5%;
- ຂະແໜງອຸດສາຫະກຳ ຂະຫຍາຍຕົວສະເລ່ຍ 4,1%;
- ຂະແໜງການບໍລິການ ຂະຫຍາຍຕົວສະເລ່ຍ 6%;
- ພາສີ-ອາກອນ ຂະຫຍາຍຕົວສະເລ່ຍ 5,8%.

ຮອດປີ 2025 ສູ້ຊົນໃຫ້ໂຄງປະກອບເສດຖະກິດ ຂະແໜງກະສິກຳກວມເອົາ 15,3%, ຂະແໜງອຸດສາຫະກຳກວມເອົາ 32,3%, ຂະແໜງບໍລິການ ກວມເອົາ 40,7% ແລະ ພາສີ-ອາກອນ ກວມເອົາ 11,7% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

#### 2) ດ້ານເງິນຕາ

- ສືບຕໍ່ຮັກສາສະຖຽນລະພາບດ້ານການເງິນ-ເງິນຕາ ໂດຍການສົມທົບແໜ້ນນະໂຍບາຍການເງິນ ແລະ ນະ

ໂຍບາຍເງິນຕາ;

- ປະລິມານເງິນ M2 ຂະຫຍາຍຕົວບໍ່ເກີນ 20% ຕໍ່ປີ;
- ອັດຕາແລກປ່ຽນເງິນກີບທຽບກັບເງິນໂດລາສະຫະລັດ ເໜັງຕີງໃນກອບ ±5%;
- ອັດຕາເງິນເຟີ້ ສະເລ່ຍບໍ່ເກີນ 6%;
- ສູ້ຊົນໃຫ້ຄັງສຳຮອງເງິນຕາຕ່າງປະເທດຢູ່ໃນລະດັບທີ່ສາມາດກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 3 ເດືອນ;
- ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດໃຫ້ຢູ່ໃນລະດັບ 60% ຂອງ GDP;
- ຍອດເຫຼືອສິນເຊື່ອຂອງຂະແໜງທະນາຄານໃຫ້ຢູ່ໃນລະດັບ 49% ຂອງ GDP;
- ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຂອງທົ່ວລະບົບທະນາຄານ ສະເລ່ຍໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດເຫຼືອສິນເຊື່ອທັງໝົດ.

**3) ດ້ານແຫຼ່ງທຶນເພື່ອການພັດທະນາ**

ການລະດົມທຶນໄດ້ທັງໝົດ ປະມານ 204.599 ຕື້ກີບ ເທົ່າກັບ 19,4% ຂອງ GDP ໃນນີ້:

- ການລົງທຶນຈາກງົບປະມານພາຍໃນໃຫ້ໄດ້ 22.950 ຕື້ກີບ ເທົ່າກັບ 11% ຂອງການລົງທຶນທັງໝົດ;
- ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) 37.344 ຕື້ກີບ ເທົ່າກັບ 18% ຂອງການລົງທຶນທັງໝົດ;
- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ໄດ້ 100.000 ຕື້ກີບ ເທົ່າກັບ 49% ຂອງການລົງທຶນທັງໝົດ;
- ການລົງທຶນອື່ນໆ ໃຫ້ໄດ້ 44.305 ຕື້ກີບ ເທົ່າກັບ 22% ຂອງການລົງທຶນທັງໝົດ.

**4) ດ້ານງົບປະມານ**

- ລາຍຮັບບໍ່ຫຼຸດ 17% ຂອງ GDP;
- ລາຍຈ່າຍບໍ່ເກີນ 18% ຂອງ GDP;
- ຂາດດຸນງົບປະມານ 1% ຂອງ GDP ຫຼື ສູງສຸດບໍ່ເກີນ 2% ຂອງ GDP.

**5) ການຄ້າຕ່າງປະເທດ**

- ມູນຄ່າການສົ່ງອອກສິນຄ້າ 38.043,5 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ;
- ມູນຄ່າການນຳເຂົ້າສິນຄ້າ 32.927,3 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍບໍ່ເກີນ 9%ຕໍ່ປີ.

## 4.2 ຂະແໜງເສດຖະກິດ

### 4.2.1 ກະສິກຳ

- ຜະລິດເຂົ້າເປືອກລວມ ໃຫ້ໄດ້ 3,5-4 ລ້ານໂຕນ ຕໍ່ປີ, ທຽບໃສ່ປີ 2020 ເພີ່ມຂຶ້ນ 500.000 ໂຕນ ຫຼື ປະມານ 14%;
- ການປູກພືດເປັນສິນຄ້າສະເລ່ຍຕໍ່ປີ: ກາເຟ 175.500 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 17.310 ໂຕນ ຫຼື ປະມານ 10,9%, ສາລີອາຫານສັດ 636.900 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 118.774 ໂຕນ ຫຼື ປະມານ 22,9%), ມັນຕົ້ນ 3,6 ລ້ານໂຕນ, ອ້ອຍ 1,6 ລ້ານໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 400.000 ກວ່າໂຕນ ຫຼື ປະມານ 34,3%, ກ້ວຍ 735.500 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 14.396 ໂຕນ ຫຼື ປະມານ 1,9%;

- ການຂະຫຍາຍຝູງສັດ ຢູ່ໃນລະດັບ 3-4% ຕໍ່ປີ ຫຼື ສະໜອງຊີ້ນ ແລະ ໄຂ່ ໃຫ້ໄດ້ 340.000 ໂຕນ ຫຼື ເພີ່ມຂຶ້ນ 7,8% ທຽບໃສ່ປີ 2020;
- ການລ້ຽງປາ ແລະ ສັດນໍ້າ ຂະຫຍາຍຕົວ 3-4% ຕໍ່ປີ ຫຼື ສະໜອງປາ ແລະ ສັດນໍ້າ ໃຫ້ບັນລຸ 237.000 ໂຕນ ຫຼື ເພີ່ມຂຶ້ນ 8,4% ທຽບໃສ່ປີ 2020;
- ການສົ່ງອອກສິນຄ້າກະສິກໍາ ສະເລ່ຍ 1.200 ລ້ານໂດລາສະຫະລັດຕໍ່ປີ ທຽບໃສ່ປີ 2020 ເພີ່ມຂຶ້ນ 400 ລ້ານໂດລາສະຫະລັດ.

#### 4.2.2 ອຸດສາຫະກໍາ ແລະ ການຄ້າ

- ມູນຄ່າການຜະລິດອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ 83.079,8 ຕື້ກີບ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ;
- ມູນຄ່າຈໍລະຈອນສິນຄ້າ 424.227,5 ຕື້ກີບ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ.

#### 4.2.3 ພະລັງງານ ແລະ ບໍ່ແຮ່

- ການຜະລິດໄຟຟ້າ ໃຫ້ໄດ້ 276.096 ລ້ານກິໂລວັດໂມງ (ເພີ່ມຂຶ້ນ 70% ທຽບໃສ່ແຜນ VIII (2016-2020) ຂອງຂະແໜງພະລັງງານ ແລະ ບໍ່ແຮ່), ມູນຄ່າການຜະລິດ 140.879 ຕື້ກີບ (ເພີ່ມ ຂຶ້ນ 79% ທຽບໃສ່ແຜນ VIII (2016-2020) ຂອງຂະແໜງພະລັງງານ ແລະ ບໍ່ແຮ່), ສົ່ງອອກໄຟຟ້າໃຫ້ໄດ້ປະມານ 5.000 ເມກາວັດ;
- ມູນຄ່າການຜະລິດແຮ່ທາດ (ບໍ່ທັນປຸງແຕ່ງ) ໃຫ້ໄດ້ 7.832,1 ລ້ານໂດລາສະຫະລັດ (ເພີ່ມຂຶ້ນ 4% ທຽບໃສ່ແຜນ VIII (2016-2020) ຂອງຂະແໜງພະລັງງານ ແລະ ບໍ່ແຮ່), ມູນຄ່າການຈໍາໜ່າຍແຮ່ທາດ ໃຫ້ໄດ້ 8.336,4 ລ້ານໂດລາສະຫະລັດ. ໃນນີ້, ຈໍາໜ່າຍພາຍໃນ 1.974 ລ້ານໂດລາສະຫະລັດ ແລະ ຈໍາໜ່າຍໄປຕ່າງປະເທດ 6.362,4 ລ້ານໂດລາສະຫະລັດ;
- ສໍາຫຼວດສ້າງຂໍ້ມູນພື້ນຖານທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1/200.000 ໃນເຂດທີ່ບໍ່ໄດ້ປະຕິບັດ ຈໍານວນ 74.696 ກິໂລຕາແມັດ (ເທົ່າກັບ 31,5% ຂອງເນື້ອທີ່ທົ່ວປະເທດ).

#### 4.2.4 ບໍລິການ

- ປະລິມານຂົນສົ່ງສິນຄ້າໃນຕາໜ່າງການເຊື່ອມໂຍງເຊື່ອມຈອດ ກັບບັນດາປະເທດໃນພາກພື້ນ ໃນທຸກຮູບແບບການຂົນສົ່ງຕໍ່ປີ ປະກອບມີ: ທາງບົກ 7%, ທາງນໍ້າ 5%, ທາງອາກາດ 12%, ທາງລົດໄຟ 10% ແລະ ປະລິມານຂົນສົ່ງຜູ້ໂດຍສານຕໍ່ປີ ປະກອບມີ: ທາງບົກ 7%, ທາງນໍ້າ 5%, ທາງອາກາດ 12%, ທາງລົດໄຟ 7%;
- ຂະຫຍາຍສະຖານີ ຮັບສົ່ງ ສັນຍານມືຖືລະບົບ 3G ຄອບຄຸມໃຫ້ໄດ້ 100%, 4G ໃຫ້ໄດ້ 90% ແລະ ລະບົບ 5G ຄອບຄຸມໃຫ້ໄດ້ ຕົວເມືອງໃຫຍ່ ໃນ 18 ແຂວງທົ່ວປະເທດ, ສ້າງໃຫ້ມີສູນສໍາຮອງສູນອິນເຕີເນັດແຫ່ງຊາດ ໃຫ້ໄດ້ 2 ແຫ່ງ.

### 4.3 ຄາດໝາຍດ້ານວັດທະນະທໍາ-ສັງຄົມ

#### 4.3.1 ຄາດໝາຍຂະແໜງສຶກສາທິການ ແລະ ກິລາ

- ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນສະເລ່ຍໃນທົ່ວປະເທດ ບໍ່ໃຫ້ຫຼຸດ 86%;
- ອັດຕານັກຮຽນເຂົ້າໃໝ່ ປ.1 ທຽບໃສ່ເດັກ 6 ປີ ສູງກວ່າ 98%;

- ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ສູງກວ່າ 99%;
- ອັດຕາປະລະການຮຽນ ຂອງນັກຮຽນ ປ.1 ໃຫ້ຫຼຸດຈາກ 6,4% ຍັງເຫຼືອ 4%;
- ອັດຕາຈົບຊັ້ນປະຖົມສຶກສາ ໃຫ້ສູງກວ່າ 95%;
- ອັດຕາເລື່ອນຊັ້ນຈາກ ປ.5 ຫາ ມ.1 ທຽບໃສ່ນັກຮຽນຕົ້ນປີ ສູງກວ່າ 90%;
- ອັດຕາປະລະຂອງນັກຮຽນຊັ້ນປະຖົມ ໃຫ້ຫຼຸດຈາກ 4,3% ຍັງເຫຼືອ 2%;
- ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາການເລື່ອນຊັ້ນຈາກ ປ.5 ຫາ ມ.1 ໃຫ້ໄດ້ ລະຫວ່າງ 0,97-1,03;
- ອັດຕາເຂົ້າຮຽນໃໝ່ລວມຂັ້ນ ມ.4 74%;
- ອັດຕາປະລະຊັ້ນມັດທະຍົມຕອນຕົ້ນ ໃຫ້ຫຼຸດຈາກ 10,3% ຍັງເຫຼືອ 8%;
- ປະຊາກອນໜຸ່ມ, ຜູ້ປະລະການຮຽນ ແລະ ຜູ້ພາດໂອກາດໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 150.000 ຄົນ;
- ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາ ໃຫ້ໄດ້ຮັບການຝຶກອົບຮົມ ບໍ່ໃຫ້ຫຼຸດ 10% ຕໍ່ປີ;
- ສຸ້ຊຸ້ນໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ໄດ້ 5%;
- ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນຢູ່ມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ໃຫ້ໄດ້ 12.500 ຄົນ;
- ສົ່ງເສີມມວນຊົນທຸກເພດ, ທຸກໄວ ໄດ້ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາກາຍຍະກຳ ສາມາດບັນລຸໄດ້ 50% ຂອງພົນລະເມືອງ.

#### 4.3.2 ຄາດໝາຍຂະແໜງສາທາລະນະສຸກ

- ອັດຕາສ່ວນຂອງເດັກລຸ່ມ 05 ປີ ນ້ຳໜັກຫຼຸດມາດຕະຖານ ໃຫ້ຍັງເຫຼືອ 15% ຂອງປະຊາກອນເປົ້າໝາຍ;
- ອັດຕາເດັກນ້ອຍລຸ່ມ 05 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານ ໃຫ້ຍັງເຫຼືອ 27% ຂອງປະຊາກອນເປົ້າໝາຍ;
- ອັດຕາການຕາຍຂອງເດັກນ້ອຍລຸ່ມ 01 ປີ ໃຫ້ຍັງເຫຼືອ 20/1000 ຄົນເດັກນ້ອຍເກີດມີຊີວິດ;
- ອັດຕາການຕາຍຂອງເດັກນ້ອຍລຸ່ມ 05 ປີ ໃຫ້ຍັງເຫຼືອ 30/1000 ຄົນເດັກນ້ອຍເກີດມີຊີວິດ;
- ອັດຕາສ່ວນການຕາຍຂອງແມ່ ໃຫ້ຍັງເຫຼືອ 110/100.000 ຄົນເດັກນ້ອຍເກີດມີຊີວິດ;
- ອັດຕາເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງປະຊາກອນເປົ້າໝາຍ;
- ອັດຕາໃຫ້ວັກຊີນກັນພະຍາດໃນເດັກລຸ່ມ 01 ປີ ໃຫ້ໄດ້ 95% ຂອງປະຊາກອນເປົ້າໝາຍ;
- ອັດຕາຊົມໃຊ້ນ້ຳສະອາດ ໃຫ້ໄດ້ 95% ຂອງປະຊາກອນທັງໝົດ;
- ອັດຕາຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ 85% ຂອງຄອບຄົວທັງໝົດ;
- ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ໃຫ້ໄດ້ 96% ຂອງປະຊາກອນທັງໝົດ;
- ອັດຕາການປະກາດ ແລະ ຮັບຮອງບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 85% ຂອງຈຳນວນບ້ານທັງໝົດ.

#### 4.3.3 ຄາດໝາຍຂະແໜງແຮງງານ ແລະ ສະຫວັດດີການສັງຄົມ

- ພັດທະນາສີມືແຮງງານຢູ່ສະຖາບັນ ແລະ ສູນພັດທະນາສີມືແຮງງານໃນລະດັບຕ່າງໆໃຫ້ໄດ້ 10.000 ຄົນ

ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ ໃຫ້ໄດ້ 5.000 ຄົນ; ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍແຮງງານ ພັດທະນາສີມືແຮງງານຕາມສາຂາອາຊີບຕ່າງໆໃຫ້ໄດ້ 25.000 ຄົນ;

- ສົ່ງເສີມການຈັດຫາວຽກເຮັດງານທຳໃນຕະຫຼາດແຮງງານ ໃຫ້ໄດ້ 392.197 ຄົນ ແລະ ຫຼຸດຜ່ອນອັດຕາການຫວ່າງງານເປັນ 15% ໃນປີ 2025; ຕາມຂະແໜງການເສດຖະກິດຢູ່ພາຍໃນ ແລະ ຕ່າງປະເທດ;
- ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 157.500 ຄົນ, ໃນນີ້ ພາກລັດ 7.500 ຄົນ, ພາກວິສາຫະກິດ 135.000 ຄົນ ແລະ ຜູ້ສະໝັກໃຈ 15.000 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີຕໍ່ພາລະກິດປະຕິວັດຊາດປະຊາທິປະໄຕ ໃຫ້ໄດ້ 16.000 ທ່ານ ໃນນີ້ 5 ເປົ້າໝາຍບູລິມະສິດ ໃຫ້ໄດ້ 15.000 ທ່ານ ແລະ ເປົ້າໝາຍທົ່ວໄປ ໃຫ້ໄດ້ 1.000 ທ່ານ (ຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 74/ລບ, ລົງວັນທີ 27 ກໍລະກົດ 2021);
- ກວດກູ້ລະເບີດບໍ່ທັນແຕກອອກຈາກພື້ນທີ່ທຳການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມທຸລະກິດ ໃຫ້ໄດ້ 50.000 ເຮັກຕາ ແລະ ຫຼຸດຜ່ອນຈຳນວນຜູ້ທີ່ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກໃຫ້ຕໍ່າກວ່າ 40 ຄົນ/ປີ ແລະ ພັດທະນາຊີວິດການເປັນຢູ່ຂອງຜູ້ຖືກເຄາະຮ້າຍ ໃຫ້ໄດ້ 5.760 ຄົນ ຂອງຈຳນວນຜູ້ທີ່ໄດ້ຮັບເຄາະຮ້າຍທັງໝົດ 9.607 ຄົນ;
- ປຸກລະດົມ ແລະ ຮັບບໍລິຈາກເລືອດ ໃຫ້ໄດ້ 364.400 ຖົງ ໃນນີ້ ຢູ່ສູນເລືອດແຫ່ງຊາດ 151.530 ຖົງ ແລະ ທ້ອງຖິ່ນຕ່າງໆ 211.870 ຖົງ;
- ສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນສູນກາງ 1 ແຫ່ງ, ຂັ້ນແຂວງ, ນະຄອນຫຼວງ 18 ແຫ່ງ ແລະ ຂັ້ນເມືອງ 56 ແຫ່ງ.

**4.3.4 ຄາດໝາຍຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

- ສ້າງ ແລະ ຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງໃຫ້ໄດ້ 36 ຈຸດ ແລະ ຂະຫຍາຍລະບົບໂທລະໂຄ່ງຢູ່ຂັ້ນບ້ານ ໃຫ້ໄດ້ 2.800 ບ້ານ;
- ຂະຫຍາຍລະບົບເຕັກນິກ ຈາກລະບົບອານາລັອກໄປສູ່ລະບົບດີຈີຕອນ ໃຫ້ໄດ້ 22 ຈຸດ ໃນຂອບເຂດທົ່ວປະເທດ 22 ຈຸດ;
- ຊຸກຍູ້ການສ້າງຄອບຄົວວັດທະນະທຳໃຫ້ໄດ້ 130.000 ຄອບຄົວ, ບ້ານວັດທະນະທຳໃຫ້ໄດ້ 750 ບ້ານ;
- ສືບຕໍ່ສະເໜີມໍລະດົກແຫ່ງຊາດທຳມະຊາດ ຫີນໜາມໜໍ່, ແຂວງຄຳມ່ວນ ເຂົ້າເປັນມໍລະດົກໂລກ;
- ສູ້ຊົນສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນທະບຽນໃນຂະແໜງວັດທະນະທຳຄື: ສຳຫຼວດແຫຼ່ງບູຮານວິທະຍາ ໃຫ້ໄດ້ 35 ແຫ່ງ ແລະ ຂຸດຄົ້ນໃຫ້ໄດ້ 5 ແຫ່ງ; ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພະພຸດທະຮູບ 5 ແຫ່ງ; ຂຶ້ນບັນຊີມໍລະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຈາກລະດັບທ້ອງຖິ່ນໃຫ້ເປັນລະດັບຊາດໃຫ້ໄດ້ 20 ແຫ່ງ ແລະ ຂຶ້ນທະບຽນບັນຊີວັດຖຸບູຮານງານພຸດທະສິນໃຫ້ໄດ້ 5 ແຫ່ງ (ຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 74/ລບ, ລົງວັນທີ 27 ກໍລະກົດ 2021);
- ດຶງດູດນັກທ່ອງທ່ຽວເຂົ້າມາລາວໃຫ້ໄດ້ປະມານ 15 ລ້ານເທື່ອຄົນ, ສ້າງລາຍຮັບໃຫ້ໄດ້ 3.813 ລ້ານໂດລາສະຫະລັດ (ໃນກໍລະນີມີວັກຊີນປ້ອງກັນໂຄວິດ-19);
- ສຳຫຼວດ, ຈັດສັນກຳນົດຂອບເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວ ໃຫ້ໄດ້ 30 ແຫ່ງ.

### 4.4 ຄາດໝາຍດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

- ອັດຕາຄວາມທຸກຍາກຫຼຸດລົງຈາກ 18,3% ຍັງເຫຼືອ 13,9% ຂອງປະຊາກອນທັງໝົດ;
- ສ້າງຄອບຄົວພົ້ນທຸກ ໃຫ້ໄດ້ ຈຳນວນ 204.360 ຄອບຄົວ (ເພີ່ມຂຶ້ນ ຈາກ 964.149 ຄອບຄົວ ມາເປັນ 1.168.509 ຄອບຄົວ);
- ສ້າງບ້ານພົ້ນທຸກ ໃຫ້ໄດ້ 3.104 ບ້ານ (ເພີ່ມຂຶ້ນ ຈາກ 4.792 ບ້ານ ມາເປັນ 7.896 ບ້ານ);
- ສ້າງເມືອງພົ້ນທຸກ ໃຫ້ໄດ້ 69 ເມືອງ (ເພີ່ມຂຶ້ນ ຈາກ 53 ເມືອງ ມາເປັນ 122 ເມືອງ);
- ສ້າງຄອບຄົວພັດທະນາ ໃຫ້ໄດ້ 245.754 ຄອບຄົວ ເພີ່ມຂຶ້ນເປັນ 982.750 ຄອບຄົວ;
- ສ້າງບ້ານພັດທະນາ ໃຫ້ໄດ້ 4.420 ບ້ານ (ເພີ່ມຂຶ້ນ ຈາກ 747 ບ້ານ ມາເປັນ 5.167 ບ້ານ);
- ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ໃຫ້ໄດ້ຈຳນວນ 10 ບ້ານ;
- ຈັດສັນພູມລຳເນົາຄົງທີ່ ແລະ ອາຊີບໝັ້ນຄົງ ໃຫ້ປະຊາຊົນ ຢູ່ 25 ຈຸດສຸມ;
- ສ້າງສະຫະກອນການຜະລິດ ແລະ ບໍລິການ ກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 18 ຫົວໜ່ວຍ.

### 4.5 ຄາດໝາຍດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

- ເນື້ອທີ່ດິນປ່າໄມ້ ເພີ່ມຂຶ້ນ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດໃນປີ 2025;
- ປູກໄມ້ໃຫ້ໄດ້ 200.000 ເຮັກຕາ, ຟື້ນຟູປ່າໄມ້ ໃຫ້ໄດ້ 1.800.000 ເຮັກຕາ ແລະ ຍົກລະດັບປ່າສະຫງວນແຫ່ງຊາດ ເປັນສວນອຸທິຍານແຫ່ງຊາດ ໃຫ້ໄດ້ 5 ແຫ່ງ (ປ່າສະຫງວນແຫ່ງຊາດ ເຊປຽນ, ດົງຫົວສາວ, ພູເຂົາຄວາຍ, ນ້ຳກ່ານ ແລະ ນ້ຳກະດິງ);
- ສະຫຼຸບ ແລະ ປະເມີນຄືນຮູບແບບການລົງທຶນ ເພື່ອຮັກສາ ແລະ ຟື້ນຟູປ່າໄມ້ ເປັນຕົ້ນ ປ່າຍອດນ້ຳ ຊຶ່ງມີລັດ, ເອກະຊົນ ແລະ ປະຊາຊົນເຂົ້າຮ່ວມໃນຮູບແບບຂອງນ້ຳກັດຍໍລະປາ ເພື່ອຈັດຕັ້ງຜັນຂະຫຍາຍຕົວແບບດັ່ງກ່າວໃຫ້ກວ້າງຂວາງອອກຕື່ມ ເປັນຕົ້ນໃນເຂດປ່າຍອດນ້ຳ, ເຂດປົກປັກຮັກສາຊີວະນານາພັນ, ພ້ອມທັງເປັນການຊຸກຍູ້ສົ່ງເສີມການທ່ອງທ່ຽວແບບອານຸລັກທຳມະຊາດຕາມທິດຍືນຍົງ;
- ຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 1,6 ລ້ານຕອນ ໃນຂອບເຂດທົ່ວປະເທດ ພ້ອມທັງຫັນລະບົບການຄຸ້ມຄອງທີ່ດິນໃຫ້ເປັນທັນສະໄໝ;
- ສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບຮອບດ້ານຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ ໂດຍເນັ້ນໃສ່ການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍທີ່ດິນ ໃຫ້ສຳເລັດ ແລະ ມີຜົນສັກສິດ;
- ສ້າງສະຖານີອຸຕຸນິຍົມໃໝ່ 45 ແຫ່ງ, ສະຖານີອຸທົກກະສາດໃໝ່ 25 ແຫ່ງ ແລະ ສະຖານີວັດແທກຄຸນນະພາບອາກາດ ຢ່າງໜ້ອຍໃຫ້ໄດ້ 9 ສະຖານີ ໃນທົ່ວປະເທດ;
- ສ້າງແຜນການຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ 14 ອ່າງ ແລະ ອ່າງຮັບນ້ຳຫຼັກຂອງແຂວງ ໃນຂອບເຂດທົ່ວປະເທດໃຫ້ສຳເລັດ;
- ສ້າງແຜນງານແຫ່ງຊາດ ກ່ຽວກັບການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານແຫ່ງຊາດ ກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃຫ້ສຳເລັດ;
- ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານສະໜາມຖົ່ມຂີ້ເຫຍື້ອທີ່ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ, ໃນນີ້ ຢ່າງໜ້ອຍໃຫ້ໄດ້ 5 ຈຸດ ໃນຕົວເມືອງໃຫຍ່.

### 4.6 ຄາດໝາຍດ້ານບົດບາດຍິງ-ຊາຍ

- ຊຸກຍູ້ສ້າງເງື່ອນໄຂໃຫ້ພະນັກງານນໍາພາ-ຄຸ້ມຄອງ ທີ່ເປັນເພດຍິງທຸກຂັ້ນ ໂດຍສະເລ່ຍໃຫ້ກວມ 20% ຂຶ້ນໄປ;
- ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ບັນຈຸຊັບຊ້ອນເຂົ້າເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພດຍິງ ກວມ 30% ຂຶ້ນໄປ;
- ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃຫ້ຫຼຸດລົງຈາກ 0,459 ປີ 2019 ມາເປັນ 0,430 ໃນປີ 2025;
- ດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃຫ້ເພີ່ມຂຶ້ນຈາກ 0,927 ໃນປີ 2019 ມາເປັນ 0,984 ໃນປີ 2025.

### 4.7 ຄາດໝາຍດ້ານການຄຸ້ມຄອງບໍລິຫານລັດ

- ຮອດປີ 2025 ສູ້ຊົນສ້າງໜ່ວຍງານບໍລິການຜ່ານປະຕູດຽວຂັ້ນທ້ອງຖິ່ນໃຫ້ໄດ້ຕື່ມ 15 ແຫ່ງ (ສະເລ່ຍເພີ່ມຂຶ້ນ 3 ແຫ່ງຕໍ່ປີ) ເພີ່ມຂຶ້ນຈາກປີ 2019 ທີ່ມີຈໍານວນ 43 ແຫ່ງ ມາເປັນ 58 ແຫ່ງ ໃນປີ 2025 (ຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 74/ລບ, ລົງວັນທີ 27 ກໍລະກົດ 2021);
- ສ້າງເທດສະບານ/ນະຄອນ ຊຶ່ງເປັນອົງການປົກຄອງທ້ອງຖິ່ນໃນຕົວເມືອງໃຫ້ໄດ້ຢ່າງໜ້ອຍ 8 ແຫ່ງ;
- ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ ຕາມ 7 ດ້ານ ໃຫ້ໄດ້ຢ່າງໜ້ອຍ 2/3 ຂອງຈໍານວນແຂວງທັງໝົດ;
- ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານໃຫ້ໄດ້ 1/3 ຂອງຈໍານວນເມືອງທັງໝົດ;
- ສ້າງບ້ານເປັນຫົວໜ່ວຍພັດທະນາໃຫ້ໄດ້ 2/3 ຂອງຈໍານວນບ້ານທັງໝົດ;
- ຊຸກຍູ້ ແລະ ປະກອບເຄື່ອງມື, ອຸປະກອນທັນສະໄໝທີ່ຈໍາເປັນໃຫ້ອົງການສານປະຊາຊົນສູງສຸດ, ອົງການສອບສວນສືບສວນ, ອົງການໄອຍະການປະຊາຊົນສູງສຸດ;
- ອອກຄໍາຖະແຫຼງຂອງໄອຍະການ ໃຫ້ໄດ້ 95% ຂອງຈໍານວນຄະດີທີ່ຟ້ອງຂຶ້ນສານທັງໝົດ;
- ຕັດສິນພິພາກຄະດີໃຫ້ບັນລຸໄດ້ 85% ດ້ວຍຄຸນນະພາບທີ່ດີ, ຖືກຕ້ອງກັບກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ;
- ຈັດຕັ້ງປະຕິບັດຄໍາຕັດສິນທີ່ຍັງຄ້າງ ແລະ ຄໍາຕັດສິນເຂົ້າໃໝ່ໃຫ້ໄດ້ 80%, ໃນນັ້ນ 20% ແມ່ນໃຫ້ຈັດຕັ້ງປະຕິບັດສໍາເລັດ ແລະ ປິດສໍານວນຄະດີ.

## ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ

ກອງປະຊຸມເຫັນດີຮັບຮອງເອົາ 6 ມາດຕະການ, ກົນໄກການຈັດຕັ້ງປະຕິບັດ, ການແບ່ງຄວາມຮັບຜິດຊອບ ແລະ ການຕິດຕາມປະເມີນຜົນ ຕາມການສະເໜີລັດຖະບານ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ສາມາດບັນລຸໄດ້ຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້, ສະພາແຫ່ງຊາດ ສະເໜີລັດຖະບານເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1) ຊີ້ນໍາຂະແໜງການ ແລະ ທ້ອງຖິ່ນຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ເປັນແຜນງານ ແລະ ໂຄງການລະອຽດຂອງຕົນ ໂດຍຕິດພັນກັບແຜນຄົນ ແລະ ແຜນງົບປະມານ ໃຫ້ເປັນລະບົບຕໍ່ເນື່ອງ;
2) ເອົາໃຈໃສ່ການຈັດຕັ້ງປະຕິບັດກົນໄກຄຸ້ມຄອງ, ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງານ, ໂຄງການ

ແລະ ກິດຈະກຳ ໃຫ້ຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ ໂດຍເນັ້ນໃສ່ຜົນໄດ້ຮັບ ແລະ ຜົນກະທົບຕົວຈິງ ເປັນຕົວວັດແທກ (Output and Outcome Based Approach);

3) ຄົ້ນຄວ້າປັບປຸງໂຄງສ້າງຈັດສັນງົບປະມານລົງທຶນຂອງລັດ ໃຫ້ຂະແໜງການສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມສົມດຸນ;

4) ເຊື່ອມສານ 18 ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເຂົ້າໃສ່ບັນດາເປົ້າໝາຍ ແລະ ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ຄົບຖ້ວນ, ຈະແຈ້ງ, ຊັດເຈນ ພ້ອມທັງແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຂະແໜງການໄປຈັດຕັ້ງປະຕິບັດຢ່າງຂາດຕົວ;

5) ສືບຕໍ່ຄົ້ນຄວ້ານະໂຍບາຍ, ມາດຕະການ ແລະ ວິທີການໃນການຈັດຫາແຫຼ່ງທຶນເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາ ແລະ ຍົກສູງປະສິດທິພາບຂອງການລົງທຶນ ເພື່ອຮັບປະກັນການບັນລຸເປົ້າໝາຍຂອງແຜນການທີ່ໄດ້ກຳນົດ; ຮີບຮ້ອນປັບປຸງບັນດາຕົວຊີ້ວັດອຳນວຍຄວາມສະດວກການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ດີຂຶ້ນ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ;

6) ຮັບປະກັນສະຖຽນລະພາບດ້ານເງິນຕາ ໂດຍສະເພາະ ນຳໃຊ້ປະລິມານເງິນ M2 ໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ ມີປະສິດທິພາບ ແລະ ປະສິດທິຜົນສູງ, ຮັກສາອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້;

7) ຊຸກຍູ້ສົ່ງເສີມການຜະລິດພາຍໃນ ຕາມເງື່ອນໄຂ, ທ່າແຮງ ແລະ ຈຸດພິເສດຂອງທ້ອງຖິ່ນ ພາຍໃຕ້ວິຖີຊີວິດແບບໃໝ່ (New Normal) ເພື່ອທົດແທນການນຳເຂົ້າ, ຊຸກຍູ້ການສົ່ງອອກ ແນໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ;

8) ເຂັ້ມງວດການຄຸ້ມຄອງ, ຕິດຕາມກວດກາ ການເໜັງຕີງຂອງລາຄາສິນຄ້າຢ່າງເປັນລະບົບ ໂດຍສະເພາະ ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ, ພ້ອມທັງກວດກາຄຸນນະພາບ ແລະ ມາດຕະຖານຂອງສິນຄ້ານຳເຂົ້າ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ບໍລິໂພກ;

9) ຄຸ້ມຄອງການຂຸດຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ໃຫ້ມີປະສິດທິພາບ, ປະສິດທິຜົນ, ຍືນຍົງ, ປະຢັດ ແລະ ນຳເອົາຜົນປະໂຫຍດສູງສຸດ ມາໃຫ້ປະເທດຊາດ;

10) ຄົ້ນຄ້ວາ ແລະ ກວດກາຄືນການກຳນົດບັນດາຈຸດສຸມການພັດທະນາ ແລະ ຄາດໝາຍສູ້ຊົນແຕ່ລະດ້ານ ຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ສອດຄ່ອງກັບເງື່ອນໄຂທ່າແຮງ ແລະ ຄວາມສາມາດຕົວຈິງ;

11) ຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ອອກເປັນແຜນຈັດສັນທີ່ດິນ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ລະອຽດ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນໃຫ້ສຳເລັດໂດຍໄວ ຕິດພັນກັບການຊຸກຍູ້ຢ່າງແຂງແຮງໃນການຈັດຕັ້ງຜັນຂະຫຍາຍກົດໝາຍທີ່ດິນ ໃຫ້ເຂົ້າສູ່ຊີວິດຕົວຈິງໂດຍໄວ ແລະ ມີຜົນສັກສິດ;

12) ເພີ່ມທະວີໃນການຕິດຕາມ, ກວດກາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດຈາກການພັດທະນາໂຄງການຕ່າງໆ ເປັນຕົ້ນ ໂຄງການຂຸດຄົ້ນບໍ່ແຮ່, ໂຄງການພັດທະນາໄຟຟ້າ, ໂຄງການກໍ່ສ້າງພື້ນຖານໂຄງລ່າງ ໃຫ້ສອດຄ່ອງຕາມກົດໝາຍ;

13) ສ້າງ ແລະ ຈັດຕັ້ງປະຕິບັດແຜນແມ່ບົດແລວທາງເສດຖະກິດເໜືອ-ໃຕ້, ຕາເວັນອອກ-ຕາເວັນຕົກ ເພື່ອນຳໃຊ້ທ່າແຮງຂອງທາງລົດໄຟ ລາວ-ຈີນ, ທາງດ່ວນ ວຽງຈັນ-ວັງວຽງ ແລະ ທາງດ່ວນອື່ນໆ ໃຫ້ມີປະສິດທິຜົນສູງ

ສຸດ ເພື່ອເຊື່ອມຈອດກັບບັນດາປະເທດເພື່ອນບ້ານ ແລະ ພາກພື້ນໃນອາຊຽນ;

14) ຊຸກຍູ້ສົ່ງເສີມການນໍາໃຊ້ວິທະຍາສາດເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນທຸກຂະແໜງການແຕ່ສູນກາງຮອດທ້ອງຖິ່ນ ເພື່ອຫັນເປັນອຸດສາຫະກໍາທັນສະໄໝເທື່ອລະກ້າວຢ່າງມີຈຸດສຸມ, ຍົກສູງສະມັດຖະພາບຂອງແຮງງານ ແລະ ການຜະລິດ ແນໃສ່ການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ;

15) ຄົ້ນຄວ້ານະໂຍບາຍ, ມາດຕະການ ແລະ ວິທີການ ແກ້ໄຂບັນດາຄາດໝາຍທີ່ບໍ່ບັນລຸ ແລະ ຖົດຖອຍ ຂອງຂະແໜງສຶກສາທິການ ແລະ ກິລາ ແລະ ຂະແໜງສາທາລະນະສຸກ; ຊຸກຍູ້ສົ່ງເສີມໃຫ້ຂະແໜງການສຶກສາທິການ ແລະ ກິລາ ປັບປຸງ, ພັດທະນາຫຼັກສູດ ແລະ ສື່ການຮຽນການສອນ ເພື່ອສາມາດຕອບສະໜອງໃຫ້ແກ່ການພັດທະນາອຸດສາຫະກໍາຍຸກ 4.0, ເອົາໃຈໃສ່ເປັນພິເສດ ຍົກສູງຄຸນນະພາບການສຶກສາ ແລະ ການບໍລິການສາທາລະນະສຸກໃຫ້ທົ່ວເຖິງ ໂດຍສະເພາະປະຊາຊົນບັນດາເຜົ່າໃນເຂດຊົນນະບົດ ຫ່າງໄກສອກຫຼີກ ແລະ ເຂດຊາຍແດນ ໃຫ້ສາມາດເວົ້າ, ຂຽນພາສາລາວໄດ້ ແລະ ໄດ້ຮັບການບໍລິການດ້ານສຸຂະພາບຂັ້ນຕົ້ນ;

16) ຄົ້ນຄວ້າກໍານົດນະໂຍບາຍ, ມາດຕະການ ແລະ ວິທີການ ເພື່ອພັດທະນາສີມືແຮງງານ ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທໍາໃຫ້ແຮງງານລາວ, ສ້າງເງື່ອນໄຂໃຫ້ແຮງງານເຂົ້າເຖິງການບໍລິການປະກັນສັງຄົມ ທີ່ມີປະສິດທິພາບ;

17) ພັດທະນາຜະລິດຕະພັນທາງດ້ານວັດທະນະທໍາ ໃຫ້ເປັນເສດຖະກິດ, ມີຄວາມຫຼາກຫຼາຍ ທັງປະລິມານ ແລະ ຄຸນນະພາບ, ເພີ່ມທະວີການຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດການສ້າງຄອບຄົວ ແລະ ບ້ານວັດທະນະທໍາ ໃຫ້ຕໍ່ເນື່ອງ ແລະ ຮັບປະກັນໃຫ້ມີຄວາມຍືນຍົງ, ປັບປຸງໂຄງລ່າງພື້ນຖານດ້ານການທ່ອງທ່ຽວໃຫ້ໄດ້ມາດຕະຖານ, ມີຄຸນນະພາບ ແລະ ສ້າງວົງຈອນການທ່ອງທ່ຽວໃຫ້ເປັນຜະລິດຕະພັນໃໝ່;

18) ຄົ້ນຄວ້າເພີ່ມງົບປະມານ ເຂົ້າໃນຂະແໜງການສຶກສາທິການ ແລະ ກິລາ, ສາທາລະນະສຸກ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດບັນດາຄາດໝາຍທີ່ຍັງບໍ່ທັນບັນລຸ ແລະ ຖົດຖອຍ;

19) ສືບຕໍ່ເປັນເຈົ້າການປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມ ການແຜ່ລະບາດຂອງພະຍາດໂຄວິດ-19, ກະກຽມຄວາມພ້ອມເພື່ອຮັບມືກັບການແຜ່ລະບາດຂອງພະຍາດຕາມລະດູການ, ການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທໍາມະຊາດ ແລະ ອື່ນໆ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ລັດຖະບານຊີ້ນໍາບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ, ບັນດາກໍາມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດໍາເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**